**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງບໍລິຄຳໄຊ
ພະແນກສຶກສາທິການ ແລະ ກິລາແຂວງ

ເລກທີ 668/ສກຂ
ບໍລິຄຳໄຊ, ວັນທີ 15 **ພຶດສະພາ 2026**

# ໜັງສືເຊີນເຂົ້າຮ່ວມແຂ່ງຂັນປະມູນເປີດກວ້າງພາຍໃນ

**1.** ພະແນກສຶກສາທິການ ແລະ ກິລາ ແຂວງບໍລິຄຳໄຊ ໄດ້ຮັບອະນຸມັດງົບປະມານ ຈາກກະຊວງສຶກສາທິການ ແລະ ກິລາ ຕາມແຜນການລົງທຶນຂອງລັດ ປະຈຳປີ **2026** ເພື່ອດຳເນີນ ກໍ່ສ້າງ ມີດັ່ງນີ້:

- ຂະແໜງບໍລິຫານ ແລະ ການເງິນ ພະແນກສຶກສາທິການ ແລະ ກິລາແຂວງ ບໍລິຄຳໄຊ ດ້ອຍການດຳເນີນການ ປະມູນເປີດກວ້າງພາຍໃນ.

**2.** ພະແນກສຶກສາທິການ ແລະ ກິລາແຂວງ ບໍລິຄຳໄຊ ຂໍເຊີນບັນດາບໍລິສັດກໍ່ສ້າງທີ່ສົນໃຈ ແລະ ມີຄວາມເໝາະສົມ ເຂົ້າຍື່ນຊອງປະມູນ ສຳລັບ **ໂຄງການ ກໍ່ສ້າງສະໂມສອນ ແລະສະໜອງເຟີນິເຈີ ຫ້ອງການສຶກສາທິການ ແລະ ກິລາເມືອງປາກຊັນ, ຕັ້ງຢູ່ບ້ານ ສີວິໄລ**, **ເມືອງ**ປາກຊັນ, **ແຂວງບໍລິຄຳໄຊ** ໄລຍະການ ກໍ່ສ້າງແມ່ນ **36** ເດືອນ ນັບແຕ່ມື້ເຊັນສັນຍາເປັນຕົ້ນໄປ.

**3.** ການປະມູນ ຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງພາຍໃນ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍ ການຈັດຊື້- ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ **30 /ສພຊ,** ລົງວັນທີ **2** ພະຈິກ **2017** ແລະ ຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍການຈັດຊື້-ຈັດຈ້າງ ສະບັບເລກທີ **0477/ກງ,** ລົງວັນທີ **13** ກຸມພາ **2019.**

**4.** ການປະມູນນີ້ ແມ່ນອະນຸຍາດໃຫ້ທຸກໆບໍລິສັດກໍ່ສ້າງໃນຂອບເຂດທົ່ວປະເທດ ທີ່ມີຄວາມເໝາະສົມ**,** ມີໃບອະນຸຍາດດຳເນີນທຸລະກິດກໍ່ສ້າງ ຖືກຕ້ອງຕາມກົດຫມາຍ ທີ່ກ່ຽວພັນກັບວຽກ ທີ່ຈະດຳເນີນການກໍ່ສ້າງ**,** ຕ້ອງມີຖານະການເງິນພຽງພໍ (ສາມາດລົງທຶນກ່ອນໃຫ້ສຳເລັດ**100%),** ມີປະສົບການວຽກກໍ່ສ້າງ ແລະ ຕ້ອງມີວິຊາການປະຈຳສະ ໜາມ ກໍ່ສ້າງທີ່ມີປະສົບການ **5** ປີ ຂຶ້ນໄປ ແລະ **1** ຄົນຂຶ້ນໄປ.

**5.** ບໍລິສັດທີ່ມີຄວາມເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ ພະແນກສຶກສາທິການ ແລະ ກິລາແຂວງບໍລິຄຳໄຊ**,** ຂະແໜງບໍລິຫານ ແລະ ການເງິນ (ຜູ້ຮັບຜິດຊອບວຽກກໍ່ສ້າງພື້ນຖານໂຄງລ່າງ) ໂທລະສັບ: **054 2212019, 020 22338417**, ຂະແໜງຈັດຊື້-ຈັດຈ້າງພະແນກການເງິນແຂວງ ໂທລະສັບ: **020 28870055** ແລະກວດກາເບິ່ງເອກະສານປະມູນໄດ້ ຕາມທີ່ຢູ່ຂ້າງເທິງໃນໂມງລັດຖະການ.

**6.** ບໍລິສັດໃດທີ່ຕ້ອງການຊື້ເອກະສານປະມູນຄົບຊຸດ ສາມາດຊື້ໄດ້ເລີ້ມແຕ່ວັນທີ **15 ພຶດສະພາ 2026** ເປັນຕົ້ນໄປ**,** ໃນລາຄາ **1.000.000** ກີບ (**ໜຶ່ງລ້ານ** ກີບ), ຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ. ວິທີການຊຳລະຕ້ອງຈ່າຍເປັນເງິນ ສົດ.



Scanned with CamScanner

**7.** ຊອງປະມູນຄົບຊຸດຕ້ອງສົ່ງທີ່ ຫ້ອງປະຊຸມຂອງແຂວງບໍລິຄໍາໄຊ ໃນວັນທີ **25 ມິຖຸນາ 2026,** ເວລາ **9:00**ໂມງ. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກໍານົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ. ຊອງປະມູນ ທຸກໆ ຊອງຈະໄດ້ເປີດໃນເວລາ **9:20**ໂມງ, ຂອງວັນທີ **25 ມິຖຸນາ 2026** ທີ່ຫ້ອງປະຊຸມຂອງ**ພະແນກສຶກສາທິການ ແລະ ກິລາ**ແຂວງບໍລິຄໍາໄຊ ໂດຍຊ້ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ເຂົ້າແຂ່ງຂັນປະມູນທີ່ສົນໃຈ ເຂົ້າຮ່ວມນໍາ.

**8.** ເອກະສານປະມູນຕ້ອງໄດ້ປະກອບຫນັງສືຄໍ້າປະກັນການປະມູນມາພ້ອມ ໃນມູນຄ່າບໍ່ໃຫ້ຫລຸດ **2%** ຂອງມູນຄ່າປະມູນ. ຫນັງສືຄໍ້າປະກັນການປະມູນ ຕ້ອງແມ່ນຫນັງສືຄໍ້າປະກັນ ຂອງທະນາຄານ ທີ່ຖືກຕ້ອງກັບແບບຟອມທີ່ໄດ້ກໍານົດໄວ້ຢູ່ໃນເອກະສານປະມູນ ຫຼື ແຊັດເງິນສົດ.

**ຫົວໜ້າພະແນກ**

ຄໍາເພັດ ໄຊປັນຍາ
Mr Khamphet XAYPANYA

ຕິດຕໍ່ພົວພັນ

- ທ່ານ ວຽງທອງ ໄຊຍະວົງ 020 22338417;
- ທ່ານ ຄໍາປະເສີດ ພັນນະວົງ 020 2887005.

Scanned with CamScanner